ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 242/ສວສ
ນະຄອນຫຼວງວຽງຈັນ, ວັນທີ 29 OCT 2026

ແຈ້ງການ

ເຖິງ: - ທ່ານ ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ
- ຜູ້ທີ່ສົນໃຈຕ້ອງການສະໝັກສອບເສັງລະດັບຊາດວິຊາຊີບເພສັດຊະກຳ

ເລື່ອງ: ການສະໝັກສອບເສັງລະດັບຊາດ ສຳລັບວິຊາຊີບເພສັດຊະກຳ ຄັ້ງທີ 3

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ສະບັບ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການອະນຸມັດເປີດການສອບເສັງລະດັບຊາດສຳລັບວິຊາຊີບເພສັດຊະກອນ ສະບັບເລກທີ 2331/ສທ, ລົງວັນທີ 11 ກັນຍາ 2026;

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ວ່າ: ສະພາຄຸ້ມຄອງວິຊາຊີບ ສາທາລະນະສຸກ ຈະໄດ້ຈັດການສອບເສັງລະດັບຊາດ ສຳລັບເພສັດຊກອນ ຄັ້ງທີ 3 ຂຶ້ນ ໃນວັນທີ 08 ເດືອນ ທັນວາ ປີ 2026 ຢູ່ທີ່ ຄະນະເພສັດຊສາດ, ມະຫາວິທະຍາໄລ ວິທະຍາສາດສຸຂະພາບ (ມວສ). ດັ່ງນັ້ນ, ຈຶ່ງຂໍແຈ້ງໃຫ້ຜູ້ທີ່ຮຽນຈົບ ເພສັຊສາດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຮຽນຈົບ ແຕ່ປີ 2024 ເປັນຕົ້ນມາ ທີ່ຍັງບໍ່ທັນໄດ້ສອບເສັງ ແລະ ສອບເສັງ ບໍ່ຜ່ານ ທີ່ບໍ່ທັນໄດ້ຮັບໃບປະກອບວິຊາຊີບເພສັດຊະກຳ ໃຫ້ສະໝັກສອບເສັງ ແລະ ປະຕິບັດຕາມຂັ້ນຕອນລາຍລະອຽດ ດັ່ງລຸ່ມນີ້:

1. ສະໝັກສອບເສັງດ້ວຍການດາວໂຫຼດ ແບບຟອມຄຳຮ້ອງຜ່ານທາງອອນລາຍ ໄດ້ທີ່: https://hpc.gov.la/la/pharmacist/examination ຫຼື ພິວພັນເອົາແບບຟອມສະໝັກໄດ້ ທີ່ ຫ້ອງການ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ (ຕຶກສອງຊັ້ນຕໍ່ໜ້າ ຕຶກໃໝ່ 6 ຊັ້ນຂອງກະຊວງສາທາລະນະສຸກ);
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທະບຽນທາງອອນລາຍ ຜ່ານ QR Code (ຖ້າບໍ່ລົງທະບຽນ ຈະບໍ່ມີລາຍຊື່ສອບເສັງ);
3. ສົ່ງແບບຟອມຄຳຮ້ອງສະໝັກສອບເສັງ ແຕ່ ວັນທີ 1 ຫາ 20 ພະຈິກ ປີ 2026 ທີ່ ຫ້ອງການສະພາຄຸ້ມຄອງວິຊາ ຊີບສາທາລະນະສຸກ (ຕຶກສອງຊັ້ນຕໍ່ໜ້າ ຕຶກໃໝ່ 6 ຊັ້ນຂອງກະຊວງສາທາລະນະສຸກ);

4. ໃຫ້ຮັບຟັງການປະຖົມນິເທດ ວັນທີ 7 ທັນວາ 2025 ໃຫ້ເຂົ້າຮ່ວມຟັງປະຖົມນິເທດຢູ່ ຫ້ອງປະຊຸມໃຫຍ່ ວິທະຍາເຂດ ເພຍວັດ, ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ;
5. ຄ່າລົງທະບຽນສະໝັກສອບເສັງ ຈຳນວນ 350,000 ກີບ/ຄົນ (ເງິນສົດ) ເຊິ່ງຈະຕ້ອງຈ່າຍພ້ອມ ຕອນສົ່ງຟອມ ຄຳຮ້ອງສະໝັກສອບເສັງ;
6. ຜູ້ສອບເສັງ ຈະຕ້ອງກະກຽມອຸປະກອນໃນການສອບເສັງດ້ວຍຕົນເອງມາເຂົ້າຫ້ອງສອບເສັງ ເຊັ່ນ: ສໍດຳ 2B, ຢາງລົບ, ອຸປະກອນເຫຼົາສໍ ແລະ ຈັກຄິດໄລ່.

ເຊັນແທນ ປະທານ

ສຈ ດຣ ຈັນເພັງ ທຳມະວົງ

ສາມາດຕິດຕໍ່ປະສານງານ ໂທ ແລະ ວອດແອັບ:

1. ອຈ ສຳເຫຼັດ 58 894 289
2. ດຣ ຕົ້ນ 95 396 733